**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງອຸດົມໄຊ**

ຫ້ອງການຕົວແທນທະນາຄານແຫ່ງ ສປປ ລາວ

ປະຈຳເຂດເສດຖະກິດພິເສດ ສາມຫຼ່ຽມຄຳ

ເລກທີ 37 /ຫ.ທຫລ/ຂສພ.ສຫຼຄ

ບໍ່ແກ້ວ, ວັນທີ 14 ພະຈິກ 2023

# ແຈ້ງການແນະນຳ

**ເຖິງ:** ພໍ່ແມ່ປະຊາຊົນ, ຊາວຄ້າຂາຍ ແລະ ພະນັກງານ ໃນຂອບເຂດ ເຂດເສດຖະກິດພິເສດ ສາມຫຼ່ຽມຄຳ;

**ເລື່ອງ:** ເພີ່ມທະວີການປະຕິບັດນິຕິກຳກ່ຽວກັບ ການຄຸ້ມຄອງເງິນຕາຕ່າງປະເທດ, ສະຖາບັນການເງິນຈຸລະພາກທີ່ບໍ່ແມ່ນທະນາຄານ ແລະ ການນຳໃຊ້ເງິນຄຣິບໂຕ.

- ອີງຕາມກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 15/ສພຊ, ລົງວັນທີ 07 ກໍລະກົດ 2022;
- ອີງຕາມດຳລັດວ່າດ້ວຍສະຖາບັນການເງິນຈຸລະພາກ ສະບັບເລກທີ 184/ລບ, ລົງວັນທີ 20 ມິຖຸນາ 2022;
- ອີງຕາມຂໍ້ຕົກລົງວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດຢູ່ເຂດເສດຖະກິດພິເສດ ສະບັບເລກທີ 1039/ທຫລ, ລົງວັນທີ 25 ຕຸລາ 2023;
- ອີງຕາມແຈ້ງການ ກ່ຽວກັບການຊື້-ຂາຍ ແລະ ຮັບຊຳລະດ້ວຍເງິນຄຣິບໂຕ ສະບັບເລກທີ 156/ຫກ, ລົງວັນທີ 11 ສິງຫາ 2021;
- ອີງຕາມຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງຫ້ອງການຕົວແທນທະນາຄານແຫ່ງ ສປປ ລາວ ປະຈຳເຂດເສດຖະກິດພິເສດ ສະບັບເລກທີ 348/ທຫລ, ລົງວັນທີ 24 ເມສາ 2023.

ຫ້ອງການຕົວແທນທະນາຄານແຫ່ງ ສປປ ລາວ ປະຈຳເຂດເສດຖະກິດພິເສດ ສາມຫຼ່ຽມຄຳ ຂໍຖືເປັນກຽດແຈ້ງມາຍັງທ່ານ ໃຫ້ປະຕິບັດລະບຽບການກ່ຽວກັບ ການຄຸ້ມຄອງເງິນຕາຕ່າງປະເທດ, ສະຖາບັນການເງິນຈຸລະພາກທີ່ບໍ່ແມ່ນທະນາຄານ ແລະ ການນຳໃຊ້ເງິນຄຣິບໂຕ ດັ່ງນີ້:

1. ໃນການກຳນົດມູນຄ່າ, ການຕິດປະກາດ ແລະ ການໂຄສະນາ ລາຄາສິນຄ້າ, ຄ່າບໍລິການ ແລະ ຄ່າອື່ນໆ ຕ້ອງປະຕິບັດເງິນກີບເປັນຕົ້ນຕໍ, ສ່ວນເງິນຕາຕ່າງປະເທດຕ້ອງປະຕິບັດເປັນສຳຮອງ ໂດຍກຳນົດໃຫ້ທຽບເທົ່າຕາມອັດຕາແລກປ່ຽນຂອງທະນາຄານທຸລະກິດໃດໜຶ່ງທີ່ປະກາດແຕ່ລະໄລຍະ ຕາມສະກຸນເງິນທີ່ໄດ້ອະນຸຍາດ ໃຫ້ຊຳລະ ແລະ ຮັບຊຳລະ ທີ່ກຳ ນົດໃນຂໍ້ຕົກລົງ ສະບັບເລກທີ 1039/ທຫລ;

2. ການຊໍາລະ ແລະ/ຫຼື ຮັບຊໍາລະ ສາມາດປະຕິບັດເປັນເງິນກີບ ໃນຮູບແບບເງິນສົດ ແລະ ເງິນໂອນ. ສ່ວນການປະຕິບັດເປັນເງິນຕາຕ່າງປະເທດ ຕ້ອງດໍາເນີນທຸລະກໍາຜ່ານຜູ້ໃຫ້ບໍລິການຊໍາລະ ຕາມການອະນຸຍາດໃຫ້ຊໍາລະ ແລະ ຮັບຊໍາລະ ຕາມທີ່ກໍານົດໃນຂໍ້ຕົກລົງ ສະບັບເລກທີ 1039/ທຫລ;
3. ການຖືຄອງເງິນສົດເປັນເງິນຕາຕ່າງປະເທດ ແມ່ນໃຫ້ເໝາະສົມກັບລະດັບຄວາມຈໍາເປັນ ແລະ ຂອບເຂດການດໍາເນີນທຸລະກິດ, ກໍລະນີມີການເຄື່ອນຍ້າຍເງິນສົດເປັນເງິນຕາຕ່າງປະເທດທີ່ມີມູນຄ່າສູງ ເຂົ້າ-ອອກ ເຂດເສດຖະກິດພິເສດສາມຫຼ່ຽມຄໍາຢູ່ ພາຍໃນ ສປປ ລາວ ແມ່ນໃຫ້ລາຍງານຕໍ່ ຫ້ອງການຕົວແທນທະນາຄານແຫ່ງ ສປປ ລາວ ປະຈໍາເຂດເສດຖະກິດພິເສດ ສາມຫຼ່ຽມຄໍາ ເພື່ອເຮັດໃຫ້ການເຄື່ອນຍ້າຍດັ່ງກ່າວ ສອດຄ່ອງຕາມນິຕິກໍາກ່ຽວຂ້ອງ;
4. ເມື່ອຕ້ອງການແລກປ່ຽນເງິນຕາ ຕ້ອງແລກປ່ຽນເງິນຕານໍາທະນາຄານທຸລະກິດ ທີ່ຕັ້ງຢູ່ ສປປ ລາວ ເທົ່ານັ້ນ. ຫ້າມ ໃຫ້ບໍລິການເງິນຕາຕ່າງປະເທດ ຫຼື ໃຊ້ບໍລິການກັບຜູ້ໃຫ້ບໍລິການເງິນຕາຕ່າງປະເທດ ທີ່ບໍ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ເປັນຕົ້ນ ການແລກປ່ຽນເງິນຕາ, ການບໍລິການໂອນເງິນຕາຕ່າງປະເທດ, ຮັບຝາກເງິນ ແລະ ສະໜອງສິນເຊື່ອເປັນເງິນຕາຕ່າງປະເທດ;
5. ບໍ່ໃຫ້ ໂຄສະນາ ແລະ/ຫຼື ປະກາດ ການບໍລິການແລກປ່ຽນເງິນຕາຕ່າງປະເທດ, ກໍານົດ ແລະ ຕິດປະກາດ ອັດຕາແລກປ່ຽນ, ການຈັດຝຶກອົບຮົມ, ເຮັດການຕະຫຼາດ ກ່ຽວກັບເງິນຕາຕ່າງປະເທດ ທຸກຮູບແບບ ໂດຍບໍ່ໄດ້ຮັບອະນຸຍາດຈາກທະນາຄານ ແຫ່ງ ສປປ ລາວ;
6. ບໍ່ໃຫ້ ບໍລິການໃນຮູບແບບ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ, ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ, ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ, ບໍລິສັດເຊົ່າສິນເຊື່ອ ແລະ ໂຮງຊວດຈໍາ ໂດຍບໍ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ;
7. ມີສະຕິລະມັດລະວັງຕົວ ແລະ ສຶກສາຂໍ້ມູນໃຫ້ລະອຽດເລິກເຊິ່ງ ໃນການດໍາເນີນທຸລະກໍາກ່ຽວກັບເງິນຄຣິບໂຕ, ເນື່ອງຈາກເງິນຄຣິບໂຕ ບໍ່ແມ່ນເງິນ ແລະ ບໍ່ແມ່ນເຄື່ອງມື ທີ່ສາມາດໃຊ້ຊໍາລະໄດ້ຕາມກົດໝາຍຂອງ ສປປ ລາວ, ການລົງທຶນ ຫຼື ຊື້-ຂາຍ ເງິນຄຣິບໂຕ ແລະ ມີຄວາມສ່ຽງຫຼາຍດ້ານ ເປັນຕົ້ນ ຄວາມສ່ຽງດ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ຄວາມສ່ຽງດ້ານລາຄາທີ່ຜັນຜວນສູງ, ຄວາມສ່ຽງດ້ານເຕັກໂນໂລຊີ ແລະ ອາດເປັນຊ່ອງທາງຂອງກຸ່ມຄົນບໍ່ດີໃຊ້ເພື່ອຫຼອກລວງ ຫຼື ສໍ້ໂກງໄດ້;
8. ຜູ້ລະເມີດກົດໝາຍ ແລະ ລະບຽບການກ່ຽວຂ້ອງ ຈະຖືກປະຕິບັດມາດຕະການສຶກສາອົບຮົມ, ປັບໃໝ ແລະ ມາດຕະການທາງອາຍາ ຕາມທີ່ລະບຽບການກ່ຽວຂ້ອງກໍານົດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຮັບຮູ້ ແລະ ຈັດຕັ້ງປະຕິບັດແຈ້ງການແນະນໍາສະບັບນີ້ ຢ່າງເຂັ້ມງວດ.

**ວ່າການຫົວໜ້າຫ້ອງການຕົວແທນ**

ທະນາຄານແຫ່ງ ສປປ ລາວ ຫ້ອງການຕົວແທນ ທະນາຄານແຫ່ງ ສປປລາວ ປະຈໍາເຂດເສດຖະກິດພິເສດ ສາມຫຼ່ຽມຄໍາຢູ່ແຂວງບໍ່ແກ້ວ

ຈັນດາລີ ຈິດອັນຕິ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງອຸດົມໄຊ**
ຫ້ອງການຕົວແທນທະນາຄານແຫ່ງ ສປປ ລາວ
ປະຈຳເຂດເສດຖະກິດພິເສດ ສາມຫຼ່ຽມຄຳ

ເລກທີ 36 /ຫ.ທຫລ/ຂສພ.ສຫຼຄ
ບໍ່ແກ້ວ, ວັນທີ 14 ພະຈິກ 2023

## ແຈ້ງການ

**ເຖິງ:** ຜູ້ລົງທຶນຕ່າງປະເທດ ໃນເຂດເສດຖະກິດພິເສດ ສາມຫຼ່ຽມຄຳ;
**ເລື່ອງ:** ການຢັ້ງຢືນການນຳທຶນເຂົ້າມາລົງທຶນໂດຍກົງຢູ່ ສປປ ລາວ.

- ອີງຕາມກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 15/ສພຊ, ລົງວັນທີ 07 ກໍລະກົດ 2022;
- ອີງຕາມຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງຫ້ອງການຕົວແທນທະນາຄານແຫ່ງ ສປປ ລາວ ປະຈຳເຂດເສດຖະກິດພິເສດ ສະບັບເລກທີ 348/ທຫລ, ລົງວັນທີ 24 ເມສາ 2023.

ຫ້ອງການຕົວແທນທະນາຄານແຫ່ງ ສປປ ລາວ ປະຈຳເຂດເສດຖະກິດພິເສດ ສາມຫຼ່ຽມຄຳ ຂໍແຈ້ງໃຫ້ ຜູ້ລົງທຶນຕ່າງປະເທດ ໃນເຂດເສດຖະກິດພິເສດ ສາມຫຼ່ຽມຄຳ ຕ້ອງນຳທຶນຈົດທະບຽນ ແລະ ທຶນທັງໝົດເຂົ້າມາ ສປປ ລາວ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການກ່ຽວຂ້ອງ ພ້ອມທັງນຳເອກະສານມາຢັ້ງຢືນນຳຫ້ອງການ ຕົວແທນທະນາຄານແຫ່ງ ສປປ ລາວ ປະຈຳເຂດເສດຖະກິດພິເສດ ສາມຫຼ່ຽມຄຳ ພາຍໃນເວລາ 30 ວັນ ນັບແຕ່ວັນ ທີ່ໄດ້ນຳທຶນເຂົ້າ ສປປ ລາວ ໃນແຕ່ລະຄັ້ງ ຈົນກວ່າຈະຄົບຖ້ວນຕາມລະບຽບການທີ່ກ່ຽວຂ້ອງ.

ກໍລະນີ ຜູ້ລົງທຶນຕ່າງປະເທດ ມີຈຸດປະສົງກູ້ຢືມເງິນຈາກຕ່າງປະເທດ ເພື່ອມາລົງທຶນພັດທະນາໂຄງການຢູ່ ໃນເຂດເສດຖະກິດພິເສດ ສາມຫຼ່ຽມຄຳ ແມ່ນໃຫ້ສະເໜີຜ່ານ ຫ້ອງການຕົວແທນທະນາຄານແຫ່ງ ສປປ ລາວ ປະຈຳເຂດເສດຖະກິດພິເສດ ສາມຫຼ່ຽມຄຳ.

ຜູ້ລົງທຶນຕ່າງປະເທດ ທີ່ໄດ້ຮັບໜັງສືຢັ້ງຢືນການນຳທຶນເຂົ້າມາລົງທຶນໂດຍກົງຢູ່ ສປປ ລາວ ເທົ່ານັ້ນ ທີ່ມີສິດ ໂອນເງິນກຳໄລ, ເງິນປັນຜົນ, ທຶນທີ່ຍັງເຫຼືອຈາກການຂາຍ ຫຼື ຍຸບເລີກກິດຈະການຂອງຕົນກັບຄືນປະເທດ ໂດຍຜ່ານ ທະນາຄານທຸລະກິດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

**ວ່າການຫົວໜ້າຫ້ອງການຕົວແທນ**

ຫ້ອງການຕົວແທນ ທະນາຄານແຫ່ງ ສປປລາວ ປະຈຳເຂດເສດຖະກິດພິເສດ ສາມຫຼ່ຽມຄຳຢູ່ແຂວງບໍ່ແກ້ວ

**ຈັນດາລີ ຈິດອັນຕິ**

**ຂໍ້ມູນເພີ່ມຕື່ມ:**
ຫ້ອງການຕົວແທນທະນາຄານແຫ່ງ ສປປ ລາວ
ປະຈຳເຂດເສດຖະກິດພິເສດ ສາມຫຼ່ຽມຄຳ
ທີ່ຢູ່: ຕຶກສະພາບໍລິຫານເຂດເສດຖະກິດພິເສດ ສາມຫຼ່ຽມຄຳ (ຊັ້ນ 02)
ໂທ: 030 5376168 (ວັນຈັນ-ວັນສຸກ), ພາກເຊົ້າ 08:00- 11:30, ພາກບ່າຍ 13:00-16:00)